ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***************************

ກະຊວງການເງິນ ເລກທີ 0153 /ກງ

ນະຄອນຫຼວງວຽງຈັນ, ລົງວັນທີ 29 ມັງກອນ 2009

# ຄຳແນະນຳ

## ຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍການຄຸ້ມຄອງ, ການສົ່ງຄືນເງິນຄ້ຳປະກັນ ຄ່າພາສີ ແລະ ພັນທະອື່ນໆ ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຊົ່ວຄາວ

---

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20.05.2005, ມາດຕາ 39 ຂໍ້ "ງ".
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບເລກທີ 362/ນຍ, ລົງວັນທີ 19.10.2007, ມາດຕາ 12 ແລະ13.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28.02.2007, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງການເງິນ.

**ລັດຖະມົນຕີວ່າການກະຊວງການເງິນ ອອກຄຳແນະນຳ :**

**ມາດຕາ 1.** ຈຸດປະສົງ

ຄຳແນະນຳສະບັບນີ້ ວາງອອກເພື່ອຈັດຕັ້ງປະຕິບັດ ມາດຕາ 39 ຂໍ້ "ງ" ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20.05.2005; ມາດຕາ 12 ແລະ 13 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19.10.2007 ກ່ຽວກັບຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງເງິນຄ້ຳປະກັນຄ່າພາສີ ແລະ ພັນທະອື່ນໆ ສຳລັບການນຳເຂົ້າຊົ່ວຄາວ ທີ່ມີການຄ້ຳປະກັນຂອງຜູ້ແຈ້ງພາສີ ເພື່ອແນໃສ່ຮັບປະກັນໃຫ້ແກ່ການຄຸ້ມຄອງ, ການໄລ່ລຽງສົ່ງເງິນຄືນ ໃຫ້ມີຄວາມຮັດກຸມ, ເປັນເອກະພາບ ແລະ ເຂັ້ມງວດ ໃນຂອບເຂດທົ່ວປະເທດ.

**ມາດຕາ 2. ບັນຊີເງິນຝາກສະເພາະຂອງກົມພາສີ**

ເພື່ອຮັບປະກັນໃນການຄຸ້ມຄອງ, ການໄລ່ລຽງ ແລະ ການສົ່ງຄືນເງິນຄ້ຳປະກັນຄ່າພາສີ ແລະ ພັນທະອື່ນໆ ສຳລັບສິນຄ້າ,ເຄື່ອງຂອງ ທີ່ນຳເຂົ້າໃນລະບອບຊົ່ວຄາວ, ກົມພາສີຕ້ອງນຳສະເໜີ ຂໍອະນຸມັດຈາກ ລັດຖະມົນຕີວ່າການກະຊວງການເງິນ ເພື່ອຂໍເປີດບັນຊີເງິນຝາກສະເພາະຢູ່ທະນະຄານ ໂດຍກຳນົດໃຫ້ເປັນເລກບັນຊີດຽວໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນໃນການມອບ-ຖອນເງິນຂອງຜູ້ນຳເຂົ້າ.

**ມາດຕາ 3.** ການຄຸ້ມຄອງເງິນຄ້ຳປະກັນ

ການຄຸ້ມຄອງເງິນຄ້ຳປະກັນ ສຳລັບສິນຄ້າ,ເຄື່ອງຂອງ ທີ່ນຳເຂົ້າໃນລະບອບຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ແລະ 13 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007, ໃຫ້ປະຕິບັດຕາມລະບຽບການດັ່ງລຸ່ມນີ້ :

ກ. ໜ້າທີ່ຂອງ ກົມພາສີ ແລະ ທະນະຄານ :

1. ກົມພາສີ ມີໜ້າທີ່ຄຸ້ມຄອງ, ຕິດຕາມບັນຊີເງິນຝາກສະເພາະສຳລັບເງິນຄ້ຳປະກັນດັ່ງກ່າວ ໂດຍມີບັນຊີຕິດຕາມການຮັບ, ການໄລ່ລຽງ, ການສົ່ງຄືນ ແລະ ສະຫຼູບການເຄື່ອນໄຫວບັນຊີຕາມລະບຽບການໄດ້ກຳນົດໄວ້.
2. ທະນະຄານ ມີໜ້າທີ່ຄຸ້ມຄອງບັນຊີເງິນຝາກສະເພາະຂອງກົມພາສີ ຕາມລະບຽບກົດໝາຍຂອງທະນະຄານ.

ຂ. ໜ້າທີ່ຂອງຜູ້ນຳເຂົ້າ:

ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດຕາມລະບອບຊົ່ວຄາວ ພ້ອມຄັດຕິດສັນຍາຄ້ຳປະກັນ ແລະ ເອກະສານອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ຕ້ອງຮັບຜິດຊອບນຳເງິນຄ້ຳປະກັນໄປມອບເຂົ້າບັນຊີສະເພາະຂອງກົມພາສີ ຢູ່ທະນະຄານ, ສຳລັບການນຳເຂົ້າຊົ່ວຄາວ ຕາມມາດຕາ 13 ຂອງດຳລັດນາຍົກ ລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ແມ່ນໃຫ້ກຳນົດເວລາການໄລ່ລຽງຖອນເງິນຄ້ຳປະກັນ ໃນເວລາສິ້ນສຸດສັນ ຍາຄ້ຳປະກັນ.

ມາດຕາ 4. ການຄຸ້ມຄອງເງິນຄ່າພາສີ ແລະ ພັນທະອື່ນໆ

ການຄຸ້ມຄອງເງິນຄ່າພາສີ ແລະ ພັນທະອື່ນໆ ທີ່ຜູ້ແຈ້ງພາສີໄດ້ເສຍພາສີ ແລະ ພັນທະອື່ນໆ ສຳລັບການນຳເຂົ້າພາຫະນະຊົ່ວຄາວທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ ຂອງບັນດາບໍລິສັດທີ່ໄດ້ຮັບໂຄງການປະມູນສາກົນ ທີ່ນຳເຂົ້າມາຮັບໃຊ້ໂຄງການໃນໄລຍະເວລາໃດໜຶ່ງ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ ລົງວັນທີ 19/10/2007, ໃຫ້ປະຕິບັດຕາມລະບຽບການດັ່ງລຸ່ມນີ້ :

ກ. ໜ້າທີ່ຂອງ ກົມພາສີ ແລະ ທະນະຄານ :

1. ກົມພາສີ ຕ້ອງຄຸ້ມຄອງ, ຕິດຕາມບັນຊີເງິນຝາກສະເພາະສຳລັບເງິນຄ່າພາສີ ແລະ ພັນທະອື່ນໆ ໂດຍມີບັນຊີຕິດຕາມການຮັບ, ການໄລ່ລຽງ, ການສົ່ງຄືນ ແລະ ສະຫຼູບການເຄື່ອນໄຫວບັນຊີຕາມລະບຽບການໄດ້ກຳນົດໄວ້.
2. ທະນະຄານ ມີໜ້າທີ່ຄຸ້ມຄອງບັນຊີເງິນຝາກສະເພາະຂອງກົມພາສີ ຕາມລະບຽບກົດໝາຍຂອງທະນະຄານ.

ຂ. ໜ້າທີ່ຂອງຜູ້ນຳເຂົ້າ :

ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດຕາມລະບອບຊົ່ວຄາວ ພ້ອມຄັດຕິດສັນຍາຄ້ຳປະກັນ ແລະ ເອກະສານອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ຕ້ອງຮັບຜິດຊອບນຳເງິນຄ້ຳປະກັນໄປມອບເຂົ້າບັນຊີສະເພາະຂອງກົມພາສີ ຢູ່ ທະນະຄານ; ໃຫ້ກຳນົດເວລາການໄລ່ລຽງຖອນເງິນຄ່າພາສີ ແລະ ພັນທະອື່ນໆຄືນ ໃນເວລາສິ້ນສຸດສັນຍາຄ້ຳປະກັນ.

ມາດຕາ 5. ການໄລ່ລຽງສົ່ງຄືນເງິນຄ້ຳປະກັນຄ່າພາສີ ແລະ ພັນທະອື່ນໆ

ຜູ້ນຳເຂົ້າໄດ້ນຳເອົາພາຫະນະອອກຈາກດິນແດນ ສປປລາວ ແລ້ວ, ມີຈຸດປະສົງຂໍໄລ່ລຽງຖອນເງິນຄ່າພາສີ ແລະ ພັນທະອື່ນໆ ຄືນໃຫ້ປະຕິບັດຕາມລະບຽບການດັ່ງນີ້:

1. ພາຍຫຼັງຜູ້ນຳເຂົ້າໄດ້ນຳເອົາພາຫະນະສົ່ງອອກຈາກ ສປປລາວ ແລ້ວ, ຜູ້ນຳເຂົ້າຕ້ອງເຮັດໃບສະເໜີ, ພ້ອມເອກະສານປະກອບທີ່ເປັນສະບັບເດີມເຊັ່ນ: ໃບແຈ້ງພາສີເປັນລາຍລະອຽດສົ່ງອອກ, ໃບແຈ້ງພາສີເປັນລາຍລະອຽດ ສັນຍາຄ້ຳປະກັນ, ໃບຮັບເງິນ ຫຼື ໃບມອບແຊັກ ແລະ ໃບແຈ້ງປະເພດເງິນສະບັບຕົ້ນຂອງທະນະຄານ ຍື່ນຕໍ່ດ່ານພາສີບ່ອນນຳເຂົ້າ ເພື່ອໄລ່ລຽງຂໍຖອນເງິນຄ່າພາສີ ແລະ ພັນທະອື່ນໆ ພາຍໃນກຳນົດຊາວເອັດວັນ ຕາມຕາຕະລາງ ກ ແລະ ຂ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007.
2. ພາຍຫຼັງທີ່ດ່ານພາສີບ່ອນສົ່ງອອກໄດ້ຮັບໃບສະເໜີຂໍຖອນເງິນຄ່າພາສີ ແລະ ພັນທະອື່ນໆ ຈາກຜູ້ນຳເຂົ້າ, ດ່ານພາສີຕ້ອງໄລ່ລຽງຕາມຕາຕະລາງ ກ ຫຼື ຂ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007, ແລ້ວສະເໜີເປັນລາຍລັກອັກສອນຕາມແບບຟອມຂອງກົມພາສີ ເພື່ອຂໍອະນຸມັດຈ່າຍເງິນສົ່ງຄືນ ແລະ ສັ່ງມອບເຂົ້າງົບປະມານ ຈາກຫົວໜ້າກົມພາສີ ພາຍໃນກຳນົດບໍ່ເກີນເຈັດວັນ ( ບໍ່ນັບວັນພັກລັດຖະການ ).
3. ພາຍຫຼັງກົມພາສີໄດ້ຮັບການສະເໜີຂໍອະນຸມັດຈ່າຍເງິນສົ່ງຄືນຄ່າພາສີ ແລະ ພັນທະອື່ນໆ ຈາກດ່ານພາສີ ຕ້ອງສ້າງແຜນສະເໜີຂໍອະນຸມັດຈ່າຍຈາກບັນຊີສະເພາະຢູ່ ທະນະຄານ ພາຍໃນກຳນົດຫ້າວັນ ( ບໍ່ນັບວັນພັກລັດຖະການ ).
4. ພາຍຫຼັງ ທະນະຄານ ໄດ້ຮັບການສະເໜີຂໍອະນຸມັດຈ່າຍຈາກບັນຊີສະເພາະຂອງກົມພາສີ, ທະນະຄານ ຕ້ອງພິຈາລະນາເບີກຈ່າຍໃຫ້ຜູ້ນຳເຂົ້າ ພາຍໃນກຳນົດຫ້າວັນ ( ບໍ່ນັບວັນພັກລັດຖະການ ).

**ມາດຕາ 6. ການຈັດຕັ້ງປະຕິບັດ**

ມອບໃຫ້ຫ້ອງການກົມພາສີ, ຜູ້ອຳນວຍການທະນະຄານ ຈັດຕັ້ງຜັນຂະຫຍາຍຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ, ໃຫ້ບັນດາພະແນກການທີ່ກ່ຽວຂ້ອງຂອງ ກົມພາສີ, ພາສີປະຈຳເຂດ, ສາຂາທະນະຄານປະຈຳແຂວງ, ເມືອງ, ບັນດາດ່ານພາສີໃນຂອບເຂດທົ່ວປະເທດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງມີໜ້າທີ່ຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ຕາມໜ້າທີ່ຄວາມຮັບຜິດຊອບຢ່າງເຂັ້ມງວດ.

**ມາດຕາ 7. ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ທຸກຄຳແນະນຳ ແລະ ລະບຽບການທີ່ຂັດກັບຄຳແນະນຳສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງການເງິນ

ສົມດີ ດວງດີ